ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ

ເລກທີ 538 /ກປຈ

ນະຄອນຫຼວງວຽງຈັນ, ວັນທີ 24 ພະຈິກ 2025.

# ໜັງສືແຈ້ງເຊີນປະມູນ

1. ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ໃນນາມຕາງໜ້າໃຫ້ຄະນະຮັບຜິດຊອບຈັດຊື້ພາຫະນະ ຂໍເຊີນບັນດາ ບໍລິສັດ ທີ່ສົນໃຈ ແລະ ມີຄຸນນະວຸດທິເໝາະສົມ ເຂົ້າຍື່ນຊອງປະມູນ ສຳລັບສະໜອງພາຫະນະ ຈຳນວນ (ພູດ1) ປະເພດລົດຈິບ ເກຍໂອໂຕ ຈຳນວນ 1 ຄັນ, ປະເພດລົດຕູ້ 14 ບ່ອນນັ່ງ ເກຍໂອໂຕ ຈຳນວນ 6 ຄັນ, ປະ ເພດລົດກະບະ ເກຍໂອໂຕ ຈຳນວນ 12 ຄັນເພື່ອປະກອບເປັນລົດຮັບໃຊ້ວຽກງານວິຊາສະເພາະຂອງກົມພາສີ ກະຊວງການເງິນ.
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງທີ່ໄດ້ກຳນົດໄວ້ຢູ່ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບ/ກງ, ລົງວັນທີ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 13 ກຸມພາ 2019.
3. ການປະມູນໃນຄັ້ງນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິທີ່ເໝາະສົມເຂົ້າຮ່ວມແຂ່ງຂັນການປະມູນ.
4. ບໍລິສັດທີ່ມີຄຸນນະວຸດທິທີ່ເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນເອກະສານປະມູນໄດ້ທີ່ ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ກະຊວງການເງິນ ຊັ້ນ 4 ຕຶກແຄມຂອງ ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ໃນວັນ, ເວລາລັດຖະການ.
5. ເອກະສານປະມູນຄົບຊຸດທີ່ເປັນພາສາລາວສາມາດຊື້ໄດ້ໂດຍຜູ້ປະມູນທີ່ສົນໃຈໂດຍການພົວພັນຊື້ຊອງປະມູນ, ເລີ່ມແຕ່ 24 ພະຈິກ 2025 ຫາ 05 ທັນວາ 2025 ໃນລາຄາ 500,000 ກີບ/ຄັນ, ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ. ວິທີການຊຳລະເປັນເງິນສົດ.
6. ຊອງປະມູນຕ້ອງສົ່ງໃນເວລາ ຫຼື ກ່ອນເວລາ ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ສົ່ງຄືນໂດຍບໍ່ມີການເປີດຊອງ.
7. ຊອງປະມູນທຸກໆຊອງຈະໄດ້ເປີດໃນວັນທີ 05 ທັນວາ 2025 ເວລາ 09:00ໂມງ ທີ່ຫ້ອງປະຊຸມກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ກະຊວງການເງິນ ຊັ້ນ4 ( ຕຶກແຄ້ມຂອງ ) ໂດຍຊອງໜ້າຄະນະກຳມະການປະມູນ ແລະ ຕົວແທນຜູ້ປະມູນທີ່ສົນໃຈເຂົ້າຮ່ວມ.
8. ທຸກຊອງປະມູນຕ້ອງມີໜັງສືຄ້ຳປະກັນການປະມູນຈາກທະນາຄານ ຫຼື ເງິນສົດ ຊຶ່ງມີມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫຼຸດ 2 %ຂອງມູນຄ່າທີ່ສະເໜີປະມູນ.
9. ທີ່ຢູ່ແມ່ນ ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ກະຊວງການເງິນ ( ຕຶກແຄມຂອງ ) ເບີໂທຕິດຕໍ່ 02028999891, 020 29815802.

ຫົວໜ້າກົມ

ກະຊວງການເງິນ ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ

ອຸຕະແກ້ວ ແກ້ວດວງສົມ